PLACE
STAMP
HERE

DIVISION OF CHILD SUPPORT
PO BOX 11520
TACOMA WA  98411-5520

**ແຫລ່ງຊ່ວຍເຫລືອດ້ານກົດໝາຍ**
Northwest Justice Project
Coordinated Legal Education,
Advice & Referral
(CLEAR) Project
**888-201-1014**
**www.nwjustice.org**

**Northwest Women's Law Center**
ສາຍໂທຣາຍຣະອຽດ ແລະ ການສົ່ງຕໍ່
**206-621-7691**

**ແວບໄຊທ໌ຂອງສານ**
ຕິດຕໍ່ຫາສານໄດ້ທີ່
**www.courts.wa.gov/**

**Division of Child Support**
**DCS**
PO Box 11520
Tacoma, WA 98411
www.dshs.wa.gov/dcs/
DCS-CRU@dshs.wa.gov

**ຄລີນິກຊ່ວຍເຫລືອທາງກົດໝາຍ ແລະ ຣາຍຣະອຽດທາງກົດໝາຍ**
**wsba.org/atj/contact/legasst.htm**

**ຣາຍຣະອຽດທຸກໆຢ່າງຢູ່ໃນບັນທຶກຂອງ DCS ແມ່ນເປັນຄວາມລັບ**

ທ່ານສາມາດໃຫ້ຄົນໃດຄົນນຶ່ງ (ພີ່ນ້ອງ, ຫມູ່ເພື່ອນ ຫລື ທະນາຍຄວາມ) ໂທຫາພະແນກ DCS ໃນນາມຂອງທ່ານ. ພວກເຮົາສາມາດຕອບຄຳຖາມທົ່ວໄປສຳລັບທຸກໆຄົນ, ແຕ່ວ່າພວກເຮົາບໍ່ສາມາດເວົ້າລົມຣາຍຣະອຽດຂອງກໍຣະນີອັນເຈາະຈົງນອກຈາກວ່າພວກເຮົາມີໃບອະນຸຍາດຂອງທ່ານ.

ໂທຫາຫ້ອງການ **DCS** ໃກ້ບ້ານທ່ານທີ່ສຸດ ຫລື ໂທຫາ **800-442-KIDS (5437)** ເພື່ອຈະຊອກຫາຫ້ອງການທີ່ກຳລັງສຳນວນເອກສານຂອງທ່ານ.

**ຫ້ອງການ DCS:**

| | |
|---|---|
| **Everett** | 800-729-7580<br>425-438-4800 |
| **Kennewick** | 800-345-9981<br>509-374-2000 |
| **Olympia** | 800-345-9964<br>360-664-6900 |
| **Seattle** | 800-526-8658<br>206-341-7000 |
| **Spokane** | 800-345-9982<br>509-363-5000 |
| **Tacoma** | 800-345-9976<br>253-597-3700 |
| **Vancouver** | 800-345-9984<br>360-696-6100 |
| **Wenatchee** | 800-535-1113<br>509-886-6800 |
| **Yakima** | 800-441-0859<br>509-249-6000 |
| **ສຳນັກງານໃຫຍ່** | 800-457-6202<br>360-664-5000 |

ໂຄງການເກັບເງິນລ້ຽງເດັກ
ຂອງຣັດວໍຊິງຕັນ



# ຂ້າພະເຈົ້າຍັງຈະຕ້ອງໄດ້ຈ່າຍເງິນລ້ຽງເດັກຢູ່ ຫລື ບໍ່ ຖ້າຫາກວ່າຂ້າພະເຈົ້າຢູ່ໃນຄຸກຢູ່?

Washington State
Department of Social & Health Services
*Transforming lives*

DSHS 22-423 LA (Rev. 9/16) Laotian

## ຄວາມຮັບຜິດຊອບໃນເງິນລ້ຽງເດັກຂອງຂ້າພະເຈົ້າຈະຫາຍໄປບໍ່ໃນລະຫວ່າງທີ່ຂ້າພະເຈົ້າຢູ່ໃນຄຸກຢູ່?

ບໍ່. ການຈ່າຍເງິນລ້ຽງເດັກຂອງທ່ານຕ້ອງໄດ້ຈ່າຍທຸກໆເດືອນເຖິງແມ່ນວ່າທ່ານຈະຢູ່ໃນຄຸກ ຫລື ຕະຣາງຢູ່ກໍຕາມ.

ຖ້າຫາກວ່າທ່ານບໍ່ສາມາດຈ່າຍ, ຫນີ້ເງິນລ້ຽງລູກຂອງທ່ານຈະດຳເນີນຕໍ່ໄປທີ່ຈະຫລາຍຂຶ້ນທຸກໆເດືອນນອກຈາກວ່າທ່ານປ່ຽນແປງຄຳສັ່ງ.

## ແມ່ນຫຍັງເກີດຂຶ້ນນຳເງິນ 20% ທີ່ຖືກຫັກອອກຈາກເງິນທີ່ໄປເຂົ້າໃສ່ບັນຊີນັກໂທດຂອງຂ້າພະເຈົ້າ?

ກົດຫມາຍຣັດວໍຊິງຕັນຮຽກຮ້ອງໃຫ້ກົມດັດສ້າງ Department of Corrections (DOC) ໃຫ້ເອົາເງິນສຳລັບເງິນລ້ຽງລູກຈາກເງິນເຮັດວຽກ, ເງິນຄ່າຕອບແທນ, ແລະ ເງິນທົດແທນແຮງງານທີ່ຖືກຈ່າຍອອກໃຫ້ທ່ານ. ເງິນທີ່ເຂົາເຈົ້າເອົາມາຈະຖືກສົ່ງ ໄປເດືອນນຶ່ງເທື່ອນຶ່ງໄປຫາພະແນກເກັບເງິນລ້ຽງເດັກ Division of Child Support (DCS) ເພື່ອຈະໄລ່ໃສ່ສຳນວນເງິນລ້ຽງລູກຂອງທ່ານ. ຖ້າຫາກວ່າພວກ ເຮົາໄດ້ຮັບຫລາຍເກີນກວ່າທີ່ທ່ານຕິດຫນີ້ຢູ່ເງິນສ່ວນເກີນຈະຖືກຈ່າຍ ຄືນໃຫ້ບັນຊີນັກໂທດຂອງທ່ານ.

## ຂ້າພະເຈົ້າສາມາດເຮັດຫຍັງໄດ້ແດ່?

ໂດຍການຂຽນປະກອບໃບຟອມຢູ່ໃນປຶ້ມຄູ່ມືຫົວນີ້ ແລະ ການສົ່ງມາຫາ ພວກເຮົາ, ທ່ານສາມາດຮ້ອງຂໍໃຫ້ພະແນກ DCS ທີ່ຈະ:

- ກວດເບິ່ງຄືນຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານເພື່ອຈະລຸດຄ່າຈ່າຍເງິນລ້ຽງລູກປັດຈຸບັນລົງ. ອັນນີ້ອາດຈະດັດແປງຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ.ຖ້າຫາກວ່າທ່ານບໍ່ມີສຳນວນເອກສານນຳພະແນກ DCS, ທ່ານສາມາດຮ້ອງຂໍເອົາການບໍຣິການຂອງພວກເຮົາໄດ້.
- ລຸດລົງ ຫລື ຍົກເລີກສ່ວນນຶ່ງຂອງຫນີ້ເງິນລ້ຽງລູກຂອງທ່ານທີ່ຍັງຕິດຫນີ້ຣັດວໍຊິງຕັນຢູ່. ການດຳເນີນການອັນນີ້ໄດ້ຖືກເອີ້ນວ່າຄະນະກັມມະການກອງປະຊຸມ.
- ສົ່ງໄປໃຫ້ທ່ານໃບຄຳຮ້ອງຂໍເອົາການບໍຣິການ. ພວກເຮົາກໍ່ຕັ້ງສາຍເລືອດພໍ່ລູກ, ແລະ ກໍ່ຕັ້ງ, ດັດແປງ, ແລະ ບັງຄັບໃຊ້ຄຳສັ່ງສຳລັບເງິນລ້ຽງລູກແລະ ປະກັນພັຍສຸຂະພາບ.
- ປົດປ່ອຍການກັກເອົາໄວ້ຂອງພວກເຮົາໃສ່ໃບຂັບຂີ່ຣົດຂອງທ່ານ.

ພະແນກ DCS ບໍ່ໄດ້ເອົາໃຫ້ການບໍຣິການດ້ານການຢ້ຽມຢາມ, ຄວາມຄຸ້ມຄອງ, ຫລື ແຜນການລ້ຽງລູກ.

## ການປ່ຽນແປງ (ການດັດແປງ) ຄຳສັ່ງຂອງຂ້າພະເຈົ້າສາມາດຊ່ວຍເຫລືອຂ້າພະເຈົ້າໄດ້ແນວໃດ?

ເງິນລ້ຽງລູກຄວນຈະຖືກຕັ້ງເພື່ອຈະສະທ້ອນເຖິງສະພາບປັດຈຸບັນຂອງທ່ານ. ຖ້າຫາກວ່າທ່ານຢາກຈະປ່ຽນແປງຈຳນວນເງິນທີ່ທ່ານຖືກເກັບເອົານຳສຳລັບເງິນລ້ຽງລູກປັດຈຸບັນຂອງທ່ານ ທ່ານຈະຕ້ອງໄດ້ດັດແປງຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ.

- ການປ່ຽນແປງເງິນລ້ຽງລູກປັດຈຸບັນຂອງທ່ານຈະບໍ່ປ່ຽນແປງຈຳນວນຫນີ້ທີ່ທ່ານໄດ້ຕິດຢູ່ແລ້ວ.
- ມັນບໍ່ໄດ້ເກີດຂຶ້ນໂດຍອັດຕະໂນມັດໂລດ, ທ່ານຈະຕ້ອງໄດ້ຂຽນປະກອບເອກສານ ແລະ ຂໍໃຫ້ມັນປ່ຽນແປງ. ມັນສາມາດໃຊ້ເວລາຫລາຍໆເດືອນເພື່ອຈະດັດແປງຄຳສັ່ງ ແລະ ທ່ານຈະຕ້ອງໄດ້ເຮັດວຽກນຳພວກເຮົາຕະລອດເວລາເພື່ອຈະເຮັດໃຫ້ມັນເກີດຂຶ້ນໄດ້.
- ຄຳສັ່ງໃຫມ່ຈະກໍ່ຕັ້ງວັນທີເລີ້ມຕົ້ນຂອງການປ່ຽນແປງ. ວັນທີເລີ້ມຕົ້ນບໍ່ສາມາດເປັນວັນທີທີ່ທ່ານເຮັດຄຳຮ້ອງຂໍນຳພະແນກ DCS ແລະ ອາດຈະເປັນພາຍຫລັງມາ. ທ່ານຄວນຈະເຮັດຄຳຮ້ອງຂໍຂອງທ່ານໂດຍໄວເທົ່າທີ່ອາດສາມາດເປັນໄປໄດ້.

## ຂ້າພະເຈົ້າສາມາດປ່ຽນຈຳນວນເງິນທີ່ຂ້າພະເຈົ້າໄດ້ຕິດຢູ່ແລ້ວ ໄດ້ແນວໃດ?

ບາງເທື່ອ, ຂຶ້ນນຳສະພາບການທັງຫມົດຂອງທ່ານ, ພະແນກ DCS ຈະພິຈາຣະນາເບິ່ງການຍົກເລີກຫນີ້ເງິນລ້ຽງລູກບາງສ່ວນ ຫລື ທັງຫມົດຂອງທ່ານທີ່ຍັງຕິດຫນີ້ຣັດວໍຊິງຕັນຢູ່. ອັນນີ້ເກີດຂຶ້ນໃນຣະຫວ່າງການດຳເນີນການທີ່ຖືກເອີ້ນວ່າການປະຊຸມນຳຄະນະກັມມະການກອງປະຊຸມ.

ຫນ່ວຍຄະນະກັມມະການກອງປະຊຸມບໍ່ສາມາດຍົກໂທດໃນເງິນຫນີ້ທີ່ຕິດໂດຍກົງໂລດນຳຄົນໃດຄົນນຶ່ງ ຫລື ຣັດອື່ນ. ເຖິງຢ່າງໃດກໍຕາມ, ບຸກຄົນທີ່ຕິດຫນີ້ເງິນລ້ຽງລູກຢູ່ສາມາດຍົກໂທດຫນີ້ທີ່ທ່ານຍັງຕິດເຂົາເຈົ້າຢູ່. ຖ້າຫາກວ່າອັນນີ້ແມ່ນສິ່ງທີ່ທ່ານຢາກຈະເຮັດທ່ານສາມາດຕິດຕໍ່ຫາພະແນກ DCS ໄດ້ເພື່ອຣາຍລະອຽດເພີ້ມເຕີມ.

## ຖ້າຫາກວ່າຂ້າພະເຈົ້າໄດ້ຮັບໃບແຈ້ງການໃຫມ່ເດ?

ພະແນກ DCS ສາມາດສົ່ງໃບແຈ້ງການກົດຫມາຍໃຫ້ທ່ານໄດ້ໃນຂະນະທີ່ທ່ານຢູ່ໃນທີ່ກັກຂັງຢູ່, ລວມທັງໃບແຈ້ງການເພື່ອຈະກໍ່ຕັ້ງເງິນລ້ຽງລູກ.

## ຢ່າສູ່ບໍ່ສົນໃຈນຳຫນັງສືໄປສະນີຈາກພະແນກ DCS!

ຕາມປົກກະຕິແລ້ວ, ທ່ານຈະມີເວລາ 20 ວັນ ເພື່ອຈະຕອບໃບແຈ້ງການກົດຫມາຍທີ່ພວກເຮົາສົ່ງໄປໃຫ້ທ່ານ. (ໃບແຈ້ງການແຕ່ລະໃບມີຣາຍລະອຽດກ່ຽວກັບສິດທິຂອງທ່ານ).

- ຖ້າຫາກວ່າທ່ານຄັດຄ້ານເງື່ອນໄຂຢູ່ໃນໃບແຈ້ງການ, ທ່ານສະມາດຮ້ອງຂໍເອົາການຜ່ອນຄາຍນຳພວກເຮົາໄດ້.
- ຖ້າຫາກວ່າທ່ານບໍ່ຕອບໃບແຈ້ງການຄືນມາ ມັນຈະກາຍເປັນສຸດຂາຍໄປໃນຕົວໂລດຫລັງຈາກ 20 ວັນໄດ້ຜ່ານພົ້ນໄປ ແລະ ພວກເຮົາຈະເລີ້ມຕົ້ນບັງຄັບໃຊ້ມັນ.

## ໃບຂັບຂີ່ຣົດຂອງຂ້າພະເຈົ້າເດ?

ແຈ້ງບອກໃຫ້ພວກເຮົາຮູ້ຈັກນຳເມື່ອເວລາທ່ານຢູ່ໃນທີ່ຄຸມຂັງ ຫລື ກັກຂັງແຕ່ປ່ອຍອອກມາເຮັດວຽກ ແລະ ພວກເຮົາຈະປ່ອຍການກັກເອົາໄວ້ຂອງພວກເຮົາໃນໃບຂັບຂີ່ຂອງທ່ານ ແລະ ຮັກສາບໍ່ໃຫ້ຖືກກັກເອົາໄວ້ຈົນຮອດ 30 ວັນຫລັງຈາກທີ່ທ່ານຖືກປ່ອຍຕົວອອກມາ.

ໃນຣະຫວ່າງເວລາ 30 ວັນອັນນີ້ທ່ານຕ້ອງໄດ້ຕິດຕໍ່ຫາພວກເຮົາໃຫມ່ອີກເພື່ອຈະເຮັດແຜນການຈ່າຍເງິນອອກມາ. ຖ້າຫາກວ່າທ່ານບໍ່ເຮັດ, ໃບຂັບຂີ່ຣົດຂອງທ່ານອາດຈະຖືກໂຈະໄວ້ໃຫມ່ອີກໂດຍພະແນກກັບເງິນລ້ຽງເດັກ. ທ່ານໂທຫາພະແນກ DCS ໄດ້ໄວເທົ່າໃດ, ມັນຈະງ່າຍຂຶ້ນສຳລັບພວກເຮົາທີ່ຈະເຮັດວຽກນຳທ່ານ. ພວກເຮົາໄດ້ຖືກບົ່ງໃຫ້ເກັບເອົາເງິນລ້ຽງລູກປັດຈຸບັນຂອງທ່ານ ແລະ ແນວໃດແນວນຶ່ງໄປຫາເງິນລ້ຽງລູກຕ່າງໆຂອງທ່ານ.

## ແມ່ນຫຍັງຈະເກີດຂຶ້ນເມື່ອເວລາຂ້າພະເຈົ້າໄດ້ວຽກເຮັດແລ້ວ?

ເມື່ອເວລາທ່ານມີຄວາມຮັບຜິດຊອບໃນເງິນລ້ຽງລູກທ່ານໄດ້ຖືກບົ່ງໃຫ້ແຈ້ງໃຫ້ພວກເຮົາຊາບທຸກໆເທື່ອທີ່ທ່ານໄດ້ວຽກໃຫມ່ເຮັດ. ຖ້າຫາກວ່າທ່ານຕິດຕໍ່ຫາພວກເຮົາເມື່ອເວລາທ່ານຊອກວຽກເຮັດໄດ້ແລ້ວ ພວກເຮົາສາມາດເຮັດວຽກນຳທ່ານໃນຈຳນວນເງິນທີ່ທ່ານຈ່າຍແຕ່ລະເດືອນໄປໃສ່ຫນີ້ເງິນຂອງທ່ານ.

ຖ້າຫາກວ່າທ່ານບໍ່ແຈ້ງໃຫ້ພະແນກເກັບເງິນລ້ຽງເດັກຮູ້ຈັກນຳແລ້ວເມື່ອເວລາພວກເຮົາສົ່ງໃບເກັບເອົາເງິນໄປຫານາຍຈ້າງຂອງທ່ານມັນອາດຈະສູງເຖິງເຄິ່ງນຶ່ງຂອງເຊັກເບີກເງິນຂອງທ່ານ.

## ຈົ່ງໂທຫາພະແນກ DCS ແລະ ພວກເຮົາຈະເຮັດວຽກນຳທ່ານ!

ຕິດທັບໃສ່ໃຫ້ແຈບຢູ່ບ່ອນນີ້ກ່ອນສົ່ງອອກໄປທາງໄປສະນີ

# ຄຳຮ້ອງຂໍເອົາຣາຍລະອຽດຂອງ DCS

**ກະຣຸນາສົ່ງໃບຟອມມາຫາຂ້າພະເຈົ້າໄດ້ທີ່:**

- ☐ ຮ້ອງຂໍໃຫ້ DCS ປ່ຽນແປງຄຳສັ່ງຈ່າຍເງິນລ້ຽງລູກຂອງຂ້າພະເຈົ້າ.
- ☐ ຮ້ອງຂໍເອົາການບໍຣິການບັງຄັບເກັບເງິນລ້ຽງລູກເຕັມທີ່ຈາກ DCS.
- ☐ ຮ້ອງຂໍເອົາການປະຊຸມນຳຄະນະກັມມະການກອງປະຊຸມ.
- ☐ ອະນຸຍາດໃຫ້ຄົນອື່ນຄົນໃດຄົນນຶ່ງທີ່ຈະເວົ້າກ່ຽວກັບສຳນວນເອກສານຂອງຂ້າພະເຈົ້ານຳພະແນກ DCS.
- ☐ ຂ້າພະເຈົ້າຖືກກັກຂັງຕົວ, ກະຣຸນາປ່ອຍໃບຂັບຂີ່ຣົດຂອງຂ້າພະເຈົ້າ.
- ☐ ຂ້າພະເຈົ້າເສັຽອົງຄະ ແລະ ຕ້ອງການຄວາມຊ່ວຍເຫລືອພິເສດ.
- ☐ ຂ້າພະເຈົ້າອ່ານພາສາອັງກິດໄດ້ຈຳກັດ. ກະຣຸນາສົ່ງໃບຟອມມາເປັນ ______ ພາສາ

ອື່ນໆ (ອະທິບາຍ)

______

______

ຂ້າພະເຈົ້າຖືກກັກຂັງຕົວຢູ່ທີ່ ______ ເລກ DOC # ຂອງຂ້າພະເຈົ້າແມ່ນ: ______ ວັນທີປ່ອຍຕົວທີ່ຖືກຄາດຫມາຍໄວ້ຂອງຂ້າພະເຈົ້າແມ່ນ ______ ເລກເອກສານ DCS ______

ຊື່ ______

ທີ່ຢູ່ (ຖະນົນ ຫລື ຕູ້ໄປສະນີ) ______

ເມືອງ ______ ຣັດ ______ ຊິບໂຄດ ______

ລາຍເຊັນ ______ ວັນທີ ດດ / ວວ / ປປ